ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 405 /ອຊ

ນະຄອນຫລວງວຽງຈັນ, ວັນທີ 4 ເມສາ 2024

## ໜັງສືແຈ້ງເຊີນການປະມູນສົມທຽບລາຄາ

**ເຖິງ:** ບັນດາບໍລິສັດອອກແບບ ແລະ ຜະລິດເຄື່ອງໃຊ້ຫ້ອງການ

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງປະມູນສຳລັບການອອກແບບ ແລະ ຜະລິດຖົງຜ້າຝ້າຍສຳລັບເຄື່ອງໃຊ້ຫ້ອງການແຈກຢາຍໃຫ້ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄ້ຳປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024.

- ອີງຕາມການເຫັນດີຂອງຄະນະນຳກະຊວງການຕ່າງປະເທດ ລົງວັນທີ 30 ຕຸລາ 2023 ກ່ຽວກັບການເລີ່ມຂະບວນຈັດຊື້-ຈັດຈ້າງບາງໜ້າວຽກຮີບດ່ວນ ເພື່ອກະກຽມເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024;
- ອີງຕາມການເຫັນດີຂອງຄະນະນຳກະຊວງການຕ່າງປະເທດ ລົງວັນທີ 1 ເມສາ 2024 ກ່ຽວກັບການພິມເພີ່ມເຄື່ອງໃຊ້ຫ້ອງການແບບລວມສູນ.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີຄວາມສາມາດ ແລະ ມີປະສົບປະການດ້ານການອອກແບບ ແລະ ຜະລິດຖົງຜ້າຝ້າຍ ເຂົ້າຮ່ວມການປະມູນສົມທຽບລາຄາສຳລັບການອອກແບບ ແລະ ຜະລິດຖົງຜ້າຝ້າຍສຳລັບເຄື່ອງໃຊ້ຫ້ອງການແຈກຢາຍໃຫ້ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນ ພາຍໃຕ້ 3 ເສົາຄ້ຳປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ເພື່ອໃຫ້ສາມາດເລີ່ມນຳໃຊ້ໃນວັນທີ 1 ມິຖຸນາ 2024 ເປັນຕົ້ນໄປ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 5 ເມສາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 11:00 ໂມງ ຂອງວັນທີ 30 ເມສາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 11:30 ໂມງ ຂອງວັນທີ 30 ເມສາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ

ກົມອາຊຽນ

ແສງພະອາທິດ ສະນຸກຕົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 404 /ອຊ

ນະຄອນຫລວງວຽງຈັນ, ວັນທີ 4 ເມສາ 2024

## ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນສົມທຽບລາຄາ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນການອອກແບບ ແລະ ຜະລິດຖົງຜ້າຝ້າຍສໍາລັບຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດໍາເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສໍາຮອງຈາກທະນາຄານ);
6. ຕ້ອງມີເງິນຄໍ້າຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີຄວາມສາມາດ ແລະ ປະສົບການດ້ານນີ້ ຫຼື ປະສົບການວຽກທີ່ຄ້າຍຄືກັນນີ້ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງອອກແບບ ແລະ ຜະລິດຖົງຜ້າຝ້າຍສໍາລັບເຄື່ອງໃຊ້ຫ້ອງການແຈກຢາຍໃຫ້ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມອາຊຽນພາຍໃຕ້ 3 ເສົາຄໍ້າປະຊາຄົມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024 ໂດຍໃຫ້ມີກາໝາຍປະທານອາຊຽນຂອງ ສປປ ລາວ ແລະ ມີຫູພາຍບ່າ, ວັດສະດຸຜ້າແຄນວາສ, ສະກີນຜ້າ 1 ຈຸດ, ກະເປົາຊົງສີ່ຫຼ່ຽມ, ຖານສ້ອຍ, ຂະໜາດ 41 x 32 x 18 ຊມ, ສີຟ້າກົມ ແລະ ຕ້ອງສໍາເລັດກ່ອນວັນທີ 30 ພຶດສະພາ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດໍາເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກໍານົດເງື່ອນໄຂ ແນະນໍາຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ

ຮອງຫົວໜ້າກົມ

ກະຊວງການຕ່າງປະເທດ ກົມອາຊຽນ

ແສງພະອາທິດ ສະນຸກຊົນ